**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງອຸດົມໄຊ

ຫ້ອງວ່າການແຂວງ

ເລກທີ...໙໙໔/ຫວຂ

ອຸດົມໄຊ, ວັນທີ.2໔. ກໍລະກົດ 2026

# ແຈ້ງການ

**ຮຽນ: ບັນດາທ່ານ ຫົວໜ້າພະແນກການ ແລະ ອົງການທຽບເທົ່າ ອ້ອມຂ້າງ ແຂວງ ທີ່ນັບຖື!**

**ເລື່ອງ: ຂະຫຍາຍການນຳໃຊ້ລະບົບການສື່ສານພາກລັດ (G-Chat) ແລະ ລະບົບ ບໍລິຫານດິຈິຕອນ ເຂົ້າໃນການບໍລິຫານ, ບໍລິການວຽກງານຂອງລັດ.**

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງວ່າການແຂວງ ສະບັບເລກທີ 385/ຈຂ.ອຊ, ລົງວັນທີ 5 ພຶດສະພາ 2021;
- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 884/ຫສນຍ, ລົງວັນທີ 29 ມິຖຸນາ 2026;

ເພື່ອເປັນການຜັນຂະຫຍາຍຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ X (2026-2030) ຂອງແຂວງ ໂດຍສະເພາະແມ່ນວຽກງານຈຸດສຸມໃນການຫັນເປັນທັນສະໄໝເຂົ້າໃນການຄຸ້ມຄອງລັດ ທັງເປັນການກະກຽມຄວາມພ້ອມໃນການເປີດນຳໃຊ້ລະບົບການສື່ສານພາກລັດ (G-Chat) ແລະ ລະບົບບໍລິຫານດິຈິຕອນ ຢ່າງເປັນທາງການ ສະນັ້ນ, ຫ້ອງວ່າການແຂວງ ຂໍຖືເປັນກຽດຢ່າງສູງແຈ້ງມາຍັງບັນດາທ່ານ ຫົວໜ້າພະແນກການ, ອົງການທຽບເທົ່າອ້ອມຂ້າງແຂວງ ພິຈາລະນາດຳເນີນການດັ່ງນີ້:

1. ສັງລວມບັນຊີລາຍຊື່ ພະນັກງານ-ລັດຖະກອນ ພາຍໃນພະແນກການ/ອົງການຂອງຕົນ ໂດຍໃຫ້ລະບຸຂໍ້ມູນລະອຽດຄື: ຊື່ ແລະ ນາມສະກຸນ (ພາສາລາວ ແລະ ພາສາອັງກິດ), ຕຳແໜ່ງ, ເບີໂທລະສັບ ແລະ ອີເມວ (ຖ້າມີ) ແລ້ວປະກອບໃສ່ແບບຟອມທີ່ໄດ້ກຳນົດ (ດາວໂຫຼດຕາມຄິວອາໂຄດທີ່ຄັດຕິດມາພ້ອມນີ້);
2. ແຕ່ງຕັ້ງພະນັກງານ 1– 2 ທ່ານ ເພື່ອຮັບຜິດຊອບ ແລະ ເປັນຜູ້ປະສານງານ ກັບ ພະແນກເຕັກໂນໂລຊີ ແລະ ການສື່ສານແຂວງ ຢ່າງຕໍ່ເນື່ອງ;
3. ກະລຸນານຳສົ່ງແບບຟອມທີ່ປະກອບສຳເລັດໄປຍັງ ພະແນກເຕັກໂນໂລຊີ ແລະ ການສື່ສານແຂວງ ກ່ອນວັນທີ **<u>7 ສິງຫາ 2026</u>** ເພື່ອໃຫ້ທີມງານວິຊາການສາມາດນຳໄປສ້າງບັນຊີນຳໃຊ້ (User Account) ໃຫ້ສຳເລັດຕາມແຜນການທີ່ວາງໄວ້ (ເອກະສານທີ່ກ່ຽວຂ້ອງອື່ນໆ ໄດ້ຄັດຕິດມາພ້ອມນີ້).

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມແຈ້ງການສະບັບນີ້ດ້ວຍ.

**ເຊັນແທນ ຫົວໜ້າຫ້ອງວ່າການແຂວງ**

**ຮອງ ຫົວໜ້າຫ້ອງວ່າການ**

ແຂວງອຸດົມໄຊ ຫ້ອງວ່າການ

ວຽງອຸດົມ ຈັນທະວົງ

**ດາວໂຫຼດແບບຟອມ**

- **ພົວພັນປະສານງານ**
- ນ ພຸທອນ ວົງສັກ ໂທ: 20 9878 7555

# ແຜນດຳເນີນງານການຈັດຕັ້ງປະຕິບັດນຳໃຊ້ລະບົບ G-Chat ແລະ ລະບົບບໍລິຫານດິຈິຕອນ

| ລ/ດ | ເນື້ອໃນແຜນວຽກ / ຂັ້ນຕອນການປະຕິບັດ | ພາກສ່ວນຮັບຜິດຊອບ | ເດືອນ 7/2026 | ເດືອນ 8/2026 | ເດືອນ 9/2026 | ເດືອນ 10/2026 |
|---|---|---|---|---|---|---|
| **I** | **ໄລຍະທີ 1: ສ້າງບັນຊີນຳໃຊ້** | | | | | |
| 1 | ຫ້ອງວ່າການແຂວງ ອອກແຈ້ງການໃຫ້ບັນດາພະແນກການ ສັງລວມລາຍຊື່ພະນັກງານ-ລັດຖະກອນ | ຫ້ອງວ່າການແຂວງ | ——► | | | |
| 2 | ພະແນກ ຕສ ສ້າງບັນຊີນຳໃຊ້ລະບົບ ໃຫ້ແຕ່ລະພາກສ່ວນ | ພະແນກ ຕສ | ——— | ——► | | |
| **II** | **ໄລຍະທີ 2: ຝຶກອົບຮົມ ແລະ ສ້າງຄວາມເຂັ້ມແຂງ** | | | | | |
| 3 | ຈັດຝຶກອົບຮົມສ້າງຄູຝຶກ (Train The Trainer) ໃຫ້ວິຊາການໄອທີ/ບໍລິຫານ ຂອງແຕ່ລະພະແນກ | ພະແນກ ຕສ | | ——► | | |
| 4 | ຈັດກອງປະຊຸມເຜີຍແຜ່ ແລະ ຝຶກອົບຮົມການນຳໃຊ້ຕົວຈິງ (ແບ່ງເປັນ 3 ຄັ້ງ, ຄັ້ງລະ 3-4 ພະແນກ) | ພະແນກ ຕສ | | | ——► | |
| **III** | **ໄລຍະທີ 3: ທົດລອງນຳໃຊ້ ແລະ ປະເມີນຜົນ** | | | | | |
| 5 | ບັນດາພະແນກການ ເລີ່ມທົດລອງນຳໃຊ້ລະບົບເຂົ້າໃນການປະສານງານ ແລະ ຮັບ-ສົ່ງເອກະສານ | ທຸກພະແນກການ, ອົງການ | | | ——— | ——► |
| 6 | ປະເມີນຜົນການນຳໃຊ້, ແກ້ໄຂບັນຫາເຕັກນິກ ແລະ ສະຫຼຸບລາຍງານ | ພະແນກ ຕສ | | | | ——► |
| **IV** | **ໄລຍະທີ 4: ປະກາດນຳໃຊ້ເປັນທາງການ** | | | | | |
| 7 | ຫ້ອງວ່າການແຂວງ ອອກແຈ້ງການກຳນົດການນຳໃຊ້ລະບົບ G-Chat ແລະ ລະບົບບໍລິຫານດິຈິຕອນ ຢ່າງເປັນທາງການ | ຫ້ອງວ່າການແຂວງ | | | | ——► |

**ເປົ້າໝາຍຂະຫຍາຍການນຳໃຊ້ລະບົບສື່ສານພາກລັດ (G-Chat) ປີ 2026**
**ບັນດາພະແນກການ, ອົງການອ້ອມຂ້າງແຂວງ**

| ລ/ດ | ພະແນກການ/ອົງການ | ໝາຍເຫດ |
|---|---|---|
| 1 | ຫ້ອງວ່າການແຂວງ | |
| 2 | ພະແນກ ການເງິນແຂວງ | |
| 3 | ພະແນກ ອຸດສາຫະກຳ ແລະ ການຄ້າແຂວງ | |
| 4 | ພະແນກ ກະສິກຳ ແລະ ສິ່ງແວດລ້ອມແຂວງ | |
| 5 | ພະແນກ ໂຍທາທິການ ແລະ ຂົນສົ່ງແຂວງ | |
| 6 | ພະແນກ ສຶກສາທິການ ແລະ ກິລາແຂວງ | ບໍ່ກວມໂຮງຮຽນ |
| 7 | ພະແນກ ສາທາລະນະສຸກແຂວງ | ບໍ່ກວມໂຮງໝໍ |
| 8 | ພະແນກ ວັດທະນະທຳ ແລະ ການທ່ອງທ່ຽວແຂວງ | |
| 9 | ພະແນກ ແຮງງານ ແລະ ສະຫວັດດີການແຂວງ | ບໍ່ກວມສູນ |
| 10 | ພະແນກ ຍຸຕິທຳແຂວງ | |
| 11 | ພະແນກ ການຕ່າງປະເທດແຂວງ | |
| 12 | ຄະນະຈັດຕັ້ງແຂວງ | |
| 12 | ຄະນະກວດກາແຂວງ | |
| 14 | ຄະນະໂຄສະນາອົບຮົມແຂວງ | |
| 15 | ແນວລາວສ້າງຊາດແຂວງ | |
| 16 | ສະຫະພັນນັກຮົບເກົ່າແຂວງ | |
| 17 | ຄະນະບໍລິຫານຊາວໜຸ່ມແຂວງ | |
| 18 | ສະຫະພັນແມ່ຍິງແຂວງ | |
| 19 | ສະຫະພັນກຳມະບານແຂວງ | |
| 20 | ອົງການພັດທະນາ ແລະ ບໍລິຫານຕົວເມືອງ | |
| 21 | ອົງການກວດສອບປະຈຳພາກເໜືອ 2 | |
| 22 | ອົງການກາແດງແຂວງ | |
| 23 | ຫ້ອງການຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນແຂວງ | |
| 24 | ສະພາປະຊາຊົນແຂວງ | |
| | **ລວມທັງໝົດ: 24 ພາກສ່ວນ** | |